# ເອກະສານຂໍ້ມູນຄວາມຈິງຂອງກົດລະບຽບອາຫານໝາຍເລກ #35

*ສິ່ງທີ່ທ່ານຄວນຮູ້ກ່ຽວກັບກົດລະບຽບ*

WWW.HEALTHOREGON.ORG/FOODSAFETY

## ການກໍາຈັດນໍ້າເສຍຂອງລົດອາຫານເຄື່ອນທີ່

**OAR 333-150-0000, ພາກທີ 5-402.14**

**ການກໍາຈັດຂອງເສຍຈາກສະຖານປະກອບອາຫານເຄື່ອນທີ່**

ສິ່ງເສດເຫຼືອ ຫຼື ນໍ້າເສຍອື່ນໆ ຕ້ອງຖືກກໍາຈັດອອກຈາກສະຖານປະກອບອາຫານເຄື່ອນທີ່ໃນສະຖານທີ່ບໍລິການສິ່ງເສດເຫຼືອທີ່ໄດ້ຮັບອະນຸຍາດ ຫຼື ໂດຍພາຫະນະຂົນສົ່ງສິ່ງເສດເຫຼືອໃນລັກສະນະທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບ ຫຼື ສິ່ງລົບກວນ.Pf

(A) ຮ້ານອາຫານເຄື່ອນທີ່ທີ່ສ້າງນໍ້າເສຍທີ່ເປັນຂອງແຫຼວນໍ້າສິເທົາອາດຈະນໍາຂອງເສຍເຫຼົ່ານັ້ນໄປສະຖານທີ່ກໍາຈັດສະເພາະທີ່ໄດ້ຮັບອະນຸມັດຈາກໜ່ວຍງານຄຸ້ມຄອງ.

(B) ຕູ້ບັນຈຸການຂົນສົ່ງຂອງເສຍຕ້ອງຖືກອອກແບບ ແລະ ມີຈຸດປະສົງເພື່ອເກັບ ແລະ ຂົນສົ່ງນໍ້າສິເທົາໂດຍບໍ່ມີການຮົ່ວ ຫຼື ໄຫຼ ແລະ ມີຄວາມຈຸບໍ່ເກີນ 20 ແກນລອນ.Pf

**ເຫດຜົນດ້ານສາທາລະນະສຸກ:**

ທົ່ວລັດພົບກັບສິ່ງທ້າທາຍກັບສິ່ງຂອງທີ່ບໍ່ເປັນສ່ວນປະກອບທີ່ວາງໄວ້ຢູ່ເທິງພື້ນຢູ່ອ້ອມຮ້ານຄ້າເຄື່ອນທີ່ເຊິ່ງສ້າງແຫຼ່ງອາໄສສໍາລັບແມງໄມ້ ແລະ ສັດ. ຍ້ອນແນວນີ້, ພວກເຮົາໄດ້ເພີ່ມທະວີການບັງຄັບໃຊ້ກົດລະບຽບສໍາລັບການລະເມີດເຫຼົ່ານີ້ໂດຍໄດ້ຮັບການສະໜັບສະໜູນຈາກສະມາຊິກຂອງຄະນະກໍາມະການທີ່ປຶກສາກົດລະບຽບ.

ນອກເໜືອຈາກນັ້ນ, ຖັງນໍ້ານອກຮ້ານຍັງເປັນບັນຫາສາທາລະນະສຸກໂດຍມີການຮົ່ວໄຫຼຂອງນໍ້າເສຍ ແລະ ການກໍາຈັດນໍ້າເສຍທີ່ບໍ່ເໝາະສົມໃນພື້ນທີ່, ການປົນເປື້ອນການລະບາຍນໍ້າຈາກພາຍຸ ແລະ ມົນລະພິດສູ່ທະເລສາບ ແລະ ແມ່ນໍ້າຂອງພວກເຮົາ.

**ຄວາມເປັນມາ**

ຮ້ານອາຫານເຄື່ອນທີ່ ແລະ ຕູ້ຮ້ານເຄື່ອນທີ່ບາງຢ່າງແມ່ນນໍາໃຊ້ຖັງນໍ້າເສຍເທິງພື້ນຂະໜາດໃຫຍ່ເພື່ອເກັບນໍ້າເສຍຂອງພວກເຂົາ.

ຖັງເກັບເທິງພື້ນເຫຼົ່ານີ້ບໍ່ເຄີຍໄດ້ຮັບອະນຸຍາດໃນກົດລະບຽບ ແລະ ການນໍາໃຊ້ຂອງພວກເຂົາໄດ້ກໍ່ໃຫ້ເກີດບັນຫາກ່ຽວກັບການເຮ່ຍ, ຮົ່ວໄຫຼ ແລະ ການໃຫ້ນໍ້າແກ່ສັດ ແລະ ແມງໄມ້.



ຫຼັງຈາກການປຶກສາກັບຜູ້ປະກອບການຮ້ານອາຫານເຄືອນທີ່, ຄູ່ຮ່ວມງານ ແລະ ຜູ້ຄຸ້ມຄອງ, ກົດລະບຽບດ້ານສຸຂາພິບານອາຫານແມ່ນໄດ້ຮັບການເພີ່ມທະວີການອະນຸຍາດສໍາລັບການບັງຄັບໃຊ້ຖັງທີ່ບໍ່ໄດ້ຮັບອະນຸມັດເຫຼົ່ານີ້.

**ລົມກັບຜູ້ກວດກາໃນທ້ອງຖິ່ນຂອງທ່ານທັນທີເພື່ອພັດທະນາແຜນໃຫ້ສອດຄ່ອງກັບກົດລະບຽບເຫຼົ່ານີ້. ຕົວຢ່າງ ແຜນການທີ່ສອດຄ່ອງກັນແມ່ນມີໃຫ້ທາງອອນລາຍທີ່:**
**https://www.oregon.gov/OHA/PH/HEALTHYENVIRONMENTS/FOODSAFETY/Pages/mobile.aspx**

**ວິທີການກໍາຈັດ**

ມີຕົວເລືອກທີ່ຫຼາກຫຼາຍໃນການກໍາຈັດສິ່ງເສດເຫຼືອໃນທົ່ວລັດ. ຕົວຢ່າງບາງອັນໄດ້ແກ່:

- ການຂັບລົດຮ້ານຂາຍອາຫານເຄື່ອນທີ່ຂອງທ່ານໄປຍັງສະຖານທີ່ກໍາຈັດສິ່ງເສດເຫຼືອທີ່ໄດ້ຮັບອະນຸຍາດ.
- ການເພີ່ມຖັງນໍ້າເສຍທີສອງຢູ່ດ້ານເທິງທີ່ເຊື່ອມຕໍ່ກັບຖັງທີ່ມີຢູ່ຂອງທ່ານເພື່ອເພີ່ມຄວາມຈຸ.
- ການເຊື່ອມລະບົບການກໍາຈັດສິ່ງເສດເຫຼືອທີ່ໄດ້ຮັບອະນຸມັດ.
- ສະຖານທີ່ຖິ້ມ RV.
- ຖັງໄມ້ຖູພື້ນໃນຮ້ານອາຫານທີ່ໄດ້ຮັບອະນຸຍາດຂອງທ່ານ.
- ການປໍ້າຖັງໂດຍເຄື່ອງຂົນສົ່ງທີ່ໄດ້ຮັບອະນຸຍາດ.
- ນໍ້າເສຍທີ່ສາມາດຍົກຍ້າຍໄດ້ໃນຖັງ 20 ແກນລອນທີ່ຖືກອອກແບບມາໃຫ້ຖື/ຂົນສົ່ງນໍ້າສິເທົາໂດຍບໍ່ມີການຮົ່ວໄຫຼ. ບໍ່ອະນຸຍາດໃຫ້ນໍາໃຊ້ຄຸ ຫຼື ຖັງບັນຈຸອື່ນໆ



***ພາຊະນະບັນຈຸດ້ວຍທີ່ຖືໄປໄດ້ອາດຈະບໍ່ເກີນຄວາມຈຸ 20 ແກນລອນ. ຜູ້ປະກອບການອາດຈະນໍາໃຊ້ພາຊະນະບັນຈຸຫຼາຍກວ່າໜຶ່ງອັນຖ້າຈໍາເປັນ, ແຕ່ພວກເຂົາຕ້ອງເທນໍ້າອອກທຸກວັນ.***

**ຊອກຫາເຄື່ອງສູບນ້ຳທີ່ມີໃບອະນຸຍາດໃນພື້ນທີ່ຂອງທ່ານ:**

https://www.deq.state.or.us/wq/onsite/sdssearch.asp

ຖ້າຫາກອຸປະກອນຂົນສົ່ງຂອງທ່ານຜະລິດແຮງດັນຫຼາຍເກີນໄປສຳລັບຖັງນ້ອຍຂອງທ່ານ, ທ່ານສາມາດພິຈາລະນານຳໃຊ້ຖັງບັນຈຸຂະໜາດນ້ອຍແບບນີ້ເພື່ອເທນ້ຳເສຍໃນໄລຍະການສູບນ້ຳເພື່ອບໍ່ໃຫ້ເກີດສູນຍາກາດ:



*ພາຊະນະບັນຈຸປະເພດນີ້ຕ້ອງສາມາດເຄື່ອນຍ້າຍໄດ້ງ່າຍ ຫຼື ເກັບໄວ້ທາງໃນຮ້ານໃນຕອນທ້າຍຂອງວັນ.*

**ສະຖານທີ່ສຳລັບສະຖານີກຳຈັດນ້ຳເສຍໃນທົ່ວລັດໂອເຣກອນບ່ອນທີ່ສາມາດເທນ້ຳຈາກຖັງນ້ຳເສຍໃນຮ້ານ ຫຼື ພາຊະນະທີ່ຍົກໄດ້:**

https://www.rvdumps.com/category/dump-stations/?

https://rvshare.com/dumpstations/oregon

https://sanidumps.com/

https://www.campendium.com/oregon/dump-stations

ສະຖານທີ່ເຫຼົ່ານີ້ແມ່ນໄດ້ໃຫ້ຄວາມຊ່ວຍເຫຼືອແກ່ຜູ້ປະກອບການຮ້ານອາຫານເຄື່ອນທີ່ໃນການຊອກຫາແຫຼ່ງຂໍ້ມູນແຕ່ບໍ່ໄດ້ຮັບການ ຮັບຮອງ ຫຼື ອະນຸມັດໂດຍ OHA ຫຼື LPHA ທ້ອງຖິ່ນຂອງທ່ານ.

**ທາງເລືອກອື່ນໆ:**

ຕ້ອງໃຫ້ແນ່ໃຈວ່າໄດ້ຮັບການອະນຸມັດຈາກຜູ້ກວດກາຂອງທ່ານກ່ອນທີ່ຈະກຳຈັດນ້ຳເສຍໃນສະຖານທີ່ໃໝ່.

*ດ້ວຍໃບອະນຸຍາດຈາກເຈົ້າຂອງ ແລະ ຜູ້ກວດກາຂອງທ່ານ, ທ່ານຍັງສາມາດນຳໃຊ້ຮ້ານຂາຍເຄື່ອງ, ຮ້ານອາຫານ ຫຼື ອ່າງໄມ້ຖູພື້ນໃນສະຖານທີ່ທີ່ໄດ້ຮັບອະນຸຍາດທີ່ຢູ່ໃກ້ທ່ານ.*

*ຕ້ອງບໍ່ເກັບຖັງກຳຈັດນ້ຳເສຍໄວ້ໃນພາຫະນະອື່ນໆເຊັ່ນ: ດ້ານຫຼັງຂອງລົດກະບະ. ຕ້ອງເທຖັງທີ່ຢູ່ນອກຮ້ານທຸກໆມື້.*